ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ

ເລກທີ 0038 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 13 ມັງກອນ 2022

# <u>ແຈ້ງການ</u>

ເຖິງ : ສະມາຄົມນໍ້າມັນເຊື້ອໄຟ ແລະ ອາຍແກ໊ສ, ບັນດາບໍລິສັດນໍ້າມັນເຊື້ອໄຟ ແລະ ປໍ້າຂາຍຍ່ອຍນໍ້າມັນເຊື້ອໄຟ.

ເລື່ອງ : ແຈ້ງປັບຂຶ້ນລາຄາຂາຍຍ່ອຍນໍ້າມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍ ກ່ຽວກັບ ສ່ວຍສາອາກອນ ເລກທີ 01/ສພຊ, ລົງວັນທີ 07 ສິງຫາ 2021.
- ອີງຕາມ ດໍາລັດວ່າດ້ວຍ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010.
- ອີງຕາມ ດໍາລັດວ່າດ້ວຍ ການຄຸ້ມຄອງທຸລະກິດນໍ້າມັນເຊື້ອໄຟ ເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017.
- ອີງຕາມ ແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ເລກທີ 158/ຫສນຍ, ລົງວັນທີ 17 ກຸມພາ 2021.
- ອີງຕາມ ແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ເລກທີ 886/ຫສນຍ, ລົງວັນທີ 28 ກໍລະກົດ 2021.

ກະຊວງອຸດສາຫະກໍາ ແລະ ການຄ້າ, ຂໍແຈ້ງມາຍັງສະມາຄົມນໍ້າມັນເຊື້ອໄຟ ແລະ ອາຍແກ໊ສ, ບັນດາບໍລິສັດນໍ້າມັນເຊື້ອໄຟ ແລະ ປໍ້າຂາຍຍ່ອຍນໍ້າມັນເຊື້ອໄຟ ໃຫ້ປະຕິບັດລາຄາຂາຍຍ່ອຍໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ດັ່ງນີ້:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທໍາມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 14,770 | 12,900 | 11,080 |
| 2 | ແຂວງຜົ້ງສາລີ | 15,410 | 13,550 | 11,720 |
| 3 | ແຂວງຫຼວງນໍ້າທາ | 15,130 | 13,270 | 11,440 |
| 4 | ແຂວງອຸດົມໄຊ | 15,250 | 13,380 | 11,560 |
| 5 | ແຂວງບໍ່ແກ້ວ | 14,870 | 13,000 | 11,180 |
| 6 | ແຂວງຫຼວງພະບາງ | 15,140 | 13,280 | 11,450 |
| 7 | ແຂວງໄຊຍະບູລີ | 15,030 | 13,160 | 11,340 |
| 8 | ແຂວງຫົວພັນ | 15,170 | 13,310 | 11,480 |
| 9 | ແຂວງຊຽງຂວາງ | 14,960 | 13,090 | 11,270 |
| 10 | ແຂວງວຽງຈັນ | 14,770 | 12,900 | 11,080 |
| 11 | ແຂວງບໍລິຄໍາໄຊ | 14,850 | 12,980 | 11,160 |
| 12 | ແຂວງຄໍາມ່ວນ | 14,800 | 12,930 | 11,110 |
| 13 | ແຂວງສະຫວັນນະເຂດ | 14,800 | 12,930 | 11,110 |
| 14 | ແຂວງສາລະວັນ | 14,980 | 13,110 | 11,290 |
| 15 | ແຂວງຈໍາປາສັກ | 14,830 | 12,960 | 11,140 |
| 16 | ແຂວງເຊກອງ | 14,980 | 13,110 | 11,290 |
| 17 | ແຂວງອັດຕະປື | 15,010 | 13,140 | 11,320 |
| 18 | ແຂວງໄຊສົມບູນ | 15,050 | 13,180 | 11,360 |

- ລາຄາໃໝ່ນີ້ ໃຫ້ເລີ່ມປະຕິບັດ ວັນທີ 14 ມັງກອນ 2022; ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.
- ການປັບລາຄານ້ຳມັນເຊື້ອໄຟ ຄັ້ງນີ້ ແມ່ນໄດ້ຫຼຸດຄັງແຮນ້ຳມັນແອັດຊັງທຳມະດາ ແລະ ນ້ຳມັນກາຊວນ ເຫຼືອ 0 ກີບ/ລິດ/ຊະນິດ ແລະ ປັບຂຶ້ນລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ທຸກຊະນິດ ຄື: ນ້ຳມັນແອັດຊັງພິເສດ ປັບຂຶ້ນ 820 ກີບ/ລິດ, ນ້ຳມັນແອັດຊັງທຳມະດາ ແລະ ນ້ຳມັນກາຊວນ ປັບຂຶ້ນ 610 ກີບ/ລິດ/ຊະນິດ.
- ການຄິດໄລ່ເສຍພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0035/ກຄພນ, ລົງວັນທີ 12 ມັງກອນ 2022 ຈົນກວ່າຈະມີການປ່ຽນແປງ.
- ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.
- ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 1330/ອຄ, ລົງວັນທີ 30 ທັນວາ 2021.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ລັດຖະມົນຕີ

ກະຊວງອຸດສາຫະກຳ ແລະ ການຄ້າ
ລັດຖະມົນຕີ

ປອ.ຄຳແພງ ໄຊສົມແພງ

ບ່ອນສົ່ງ

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).